ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ ເລກທີ 89 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 29 / 05 / 19

# ມະຕິ

## ຂອງ ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍ ການໃຫ້ສັດຕະຍາບັນແກ່ ອະນຸສັນຍາເລກທີ 2 ວ່າດ້ວຍການກຳນົດດ່ານພາສີອາຊຽນ ໃນການຂົນສົ່ງສິນຄ້າຜ່ານແດນ

---------------------------

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈຳສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານ ນາຍົກລັດຖະມົນຕີ.
- ອີງຕາມ ໜັງສືສະເໜີຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 22/ນຍ, ລົງວັນທີ 27 ກຸມພາ 2019.
- ອີງຕາມ ການຕົກລົງຂອງ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 29 ພຶດສະພາ 2019.

**ຄະນະປະຈຳສະພາແຫ່ງຊາດຕົກລົງ:**

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ອະນຸສັນຍາເລກທີ 2 ວ່າດ້ວຍ ການກຳນົດດ່ານພາສີອາຊຽນໃນການຂົນສົ່ງສິນຄ້າຜ່ານແດນ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

**ຄະນະປະຈຳ**

ເລກທີ 11 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 30 / 05 / 19

# ໜັງສືສະເໜີ

**ຮຽນ:** ທ່ານ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ນັບຖື.

**ເລື່ອງ:** ການພິຈາລະນາອອກສານ ປະກາດການໃຫ້ສັດຕະຍາບັນແກ່ ອະນຸສັນຍາເລກທີ 2 ວ່າດ້ວຍ ການກຳນົດດ່ານພາສີອາຊຽນ ໃນການຂົນສົ່ງສິນຄ້າຜ່ານແດນ.

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 67 ຂໍ້ 14 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ປະທານປະເທດ ແຫ່ງ ສປປ ລາວ ໃນການປະກາດໃຊ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ.
- ອີງຕາມ ກົດໝາຍ ວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ ສະບັບເລກທີ 18/ສພຊ, ລົງວັນທີ 8 ພຶດສະພາ 2017, ມາດຕາ 44 ກ່ຽວກັບການປະກາດໃຫ້ສັດຕະຍາບັນ.
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 89/ຄປຈ, ລົງວັນທີ 29 ພຶດສະພາ 2019.

ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພິຈາລະນາອອກສານປະກາດການໃຫ້ສັດຕະຍາບັນແກ່ ອະນຸສັນຍາເລກທີ 2 ວ່າດ້ວຍການກຳນົດດ່ານພາສີອາຊຽນ ໃນການຂົນສົ່ງສິນຄ້າຜ່ານແດນ ເພື່ອໃຫ້ສັດຕະຍາບັນດັ່ງກ່າວມີຜົນບັງຄັບໃຊ້ຕາມລັດຖະທຳມະນູນ ແລະ ກົດໝາຍ ທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດຢ່າງສູງ ຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

**ຄະນະປະຈຳສະພາແຫ່ງຊາດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ປະທານ**

ປະທານສະພາແຫ່ງຊາດ

**ປານີ ຢາທໍ່ຕູ້**